ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 07 ຫາ 11 ສິງຫາ 2023



ການສຽບຍອດໝາກນອດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການສຽບຍອດໝາກນອດ

ການປູກໝາກນອດເພື່ອກິນໃນຄົວເຮືອນຈະແຕກຕ່າງຈາກການປູກໝາກນອດເພື່ອເປັນສິນຄ້າສົ່ງຕະຫຼາດ ຫຼື ໂຮງງານແປຮູບ ເພື່ອຮັກສາຜົນຜະລິດທີ່ມີຄຸນນະພາບ ແລະ ລົດຊາດດີ ບໍ່ປ່ຽນແປງໄປຈາກພັນເດີມ. ດັ່ງນັ້ນ, ການປູກເພື່ອການຄ້າຈຶ່ງຈຳເປັນຕ້ອງໃຊ້ເບ້ຍທີ່ປູກດ້ວຍແກ່ນ ແລະ ໃຊ້ວິທີປ່ຽນຍອດພັນດີເພື່ອໃຫ້ໄດ້ຄຸນນະພາບເດີມໂດຍມີຂັ້ນຕອນດັ່ງນີ້:

1. ການກ້າແກ່ນເພື່ອເປັນຕົ້ນຕໍ

ເບ້ຍໝາກນອດທີ່ເປັນຕົ້ນຕໍ ຄວນເປັນເບ້ຍໝາກນອດຊະນິດພັນສີເຫຼືອງ ເນື່ອງຈາກມີຄວາມແຂງແຮງ ແລະ ທົນທານຕໍ່ແມງໄມ້ໄດ້ດີ, ໂດຍແກ່ນທີ່ນຳມາກ້າຄວນເລືອກຈາກໝາກ ທີ່ມາຈາກຕົ້ນແມ່ພັນທີ່ສົມບູນບໍ່ເປັນພະຍາດ, ໂດຍນຳມາລ້າງ ຄວັ້ນເອົາແກ່ນອອກ ແລ້ວນຳໄປຕາກໃຫ້ແຫ້ງແລ້ວຈຶ່ງນຳໄປກ້າ ບໍ່ຄວນເກັບແກ່ນພັນໄວ້ດົນເພາະຈະເຮັດໃຫ້ການແຕກງອກຫຼຸດລົງ, ການກ້າແກ່ນໝາກນອດເພື່ອເປັນຕົ້ນຕໍສາມາດ ກ້າໃສ່ຖົງຢາງ ຫລື ໃນໜານກ້າກໍ່ໄດ້. ການກຽມດິນທີ່ໃຊ້ໃນການກ້າແມ່ນໃຫ້ໃຊ້ ດິນ, ຝຸ່ນໝັກ, ຂີ້ແກບເຜົາ ແລະ ຂຸຍໝາກພ້າວປະສົມກັນໃນອັດຕາສ່ວນ 2:1:1:1 ໂຮຍແກ່ນໝາກນອດເປັນແຖວແລ້ວປົກດ້ວຍດິນປູກໜາປະມານ 1 ຊັງຕີແມັດ, ລະວັງຢ່າໂຮຍແກ່ນໜາຈົນເກີນໄປຈະເຮັດໃຫ້ເກີດພະຍາດຮາກເນົ່າ ໂດຍປົກກະຕິແກ່ນໝາກ ນອດຈະເລີ່ມແຕກງອກພາຍໃນ 7-10 ມື້, ເມື່ອເບ້ຍໝາກນອດມີໃບແທ້ ອະຍຸປະມານ 15-20 ມື້, ຈຶ່ງຍ້າຍລົງຖົງປູກ ຂະໜາດ 2,5 X 6 ນີ້ວ ຫຼື ໜານປູກ, ເມື່ອຍ້າຍລົງຖົງປູກແລ້ວໃຫ້ບົວລະບັດ ແລະ ປ້ອງກັນການທຳລາຍຂອງແມງໄມ້ ແລະ ພະຍາດພືດເພື່ອໃຫ້ຕົ້ນຕໍຈະເລີນເຕີບໂຕໄດ້ດີ ໃສ່ປຸ໋ຍທາງໃບ (ປຸ໋ຍສູດ 46-0-0 ຫຼື 21-0-0) ປະສົມນ້ຳຫົດ ຫຼັງຈາກເບ້ຍໝາກນອດມີອາຍຸ 1,5-3 ເດືອນ ເປັນໄລຍະທີ່ເໝາະສົມສາມາດນຳໄປປ່ຽນຍອດໄດ້.

2. ຂັ້ນຕອນການປ່ຽນຍອດໝາກນອດ

ໝາກນອດສາມາດປົ່ງນຍອດໄດ້ງ່າຍ ແລະ ເຮັດໄດ້ທຸລະດູການ, ການປົ່ງນຍອດໃນຖົງຂໍ້ດີຄືເຮັດໄດ້ງ່າຍ ແລະ ສະດວກໃນການດູແລຮັກສາ ສາມາດເລືອກຕົ້ນກ້າທີ່ແຂງແຮງສະໝໍ່າສະເໝີກັນໄປປູກ, ນອກນີ້ຍັງໃຫ້ຜົນຜະລິດທີ່ໄວ ເຊິ່ງມີຂັ້ນຕອນຄື:

2.1 ເມື່ອຕົ້ນຕໍທີ່ປູກໄວ້ອາຍຸ 1,5-2 ເດືອນຫຼັງຈາກກ້າແກ່ນ ຈະມີໃບ 5-7 ໃບ ແລະ ລຳຕົ້ນຍັງອ່ອນຢູ່ ໃຊ້ເຫຼົ້າ 90 ເຊັດມີ, ອຸປະກອນ ແລະ ມີດຕັດເພື່ອຂ້າເຊື້ອ.



2.2 ຕັດຍອດອອກໂດຍນັບຈາກຂໍ້ໃບດ້ານລຸ່ມຂຶ້ນມາ 3-4 ໃບ, ຈາກນັ້ນຕັດໃບອອກໃຫ້ໝົດເຫຼືອແຕ່ລຳຕົ້ນ ໃຊ້ມີດຜ່າລຳຕົ້ນເລິກປະມານ 1,5-2,0 ຊັງຕີແມັດ.



2.3 ນຳຍອດພັນດີທີ່ເຮົາຕ້ອງການມາສຽບເທິງຕົ້ນຕໍ ຄວາມຍາວຂອງພັນດີແມ່ນປະມານ 15-20 ຊັງຕີແມັດ ໂດຍຕັດສ່ວນຍອດ ແລະ ປາຍໃບຂອງຍອດພັນດີທີ່ເຮົາເລືອກມາອອກ ເພື່ອຫຼຸດການຄາຍນໍ້າ, ປາດຍອດພັນດີສ່ວນດ້ານລຸ່ມໃຫ້ເປັນຮູບແຂ້ວປາ ຫຼື ໂຕວີ





2.4 ຈາກນັ້ນສຽບຍອດພັນດີທີ່ກຽມໄວ້ໃສ່ຕົ້ນຕໍທີ່ເຮົາຜ່າໄວ້ແລ້ວ, ຄຽນດ້ວຍຢາງ ຫຼື ໃຊ້ກິບໜີບ ໃນຂັ້ນຕອນນີ້ແມ່ນລະວັງບໍ່ໃຫ້ມີສໍາພັດໂດຍກົງກັບບ່ອນທີ່ເຮົາແຜທີ່ເຮົາປາດ ເມື່ອສໍາເລັດແລ້ວນໍາຕົ້ນໝາກນອດທີ່ປົ່ງຍອດແລ້ວໄປລຽງກັນໃນໜານຄຸມດ້ວຍຜ້າຢາງເພື່ອຮັກສາຄວາມຊຸ່ມ ບໍ່ໃຫ້ຍອດຫ່ຽວ.

2.5 ຄຸມຜ້າຢາງໄວ້ 7 ວັນ ຍອດພັນດີຈະຕິດສາມາດເປີດຜ້າຢາງອອກ ແລະ ສືບຕໍ່ບົວລະບັດໃຫ້ແຂງແຮງອີກ 20-30 ມື້ ສາມາດນໍາໄປປູກໄດ້.

ຊາວກະສິກອນທີ່ມີຄວາມສົນໃຈການຂະຫຍາຍພັນໝາກນອດນັ້ນຕ້ອງວາງແຜນໃຫ້ສອດຄ່ອງກັບໄລຍະເວລາໃຫ້ຜົນຜະລິດ, ໂດຍວາງແຜນຜະລິດເບ້ຍພັນໃຫ້ມີອາຍຸພໍດີເມື່ອເຖິງກໍານົດເວລາປູກ ການຜະລິດເບ້ຍໄວເກີນໄປຈະເຮັດໃຫ້ຕ້ອງສິ້ນເປືອງໃນການລ້ຽງຕົ້ນກ້າໃນຖົງປູກດິນຈະເຮັດໃຫ້ເກີດບັນຫາລະບົບຮາກບໍ່ດີ, ເບ້ຍພັນບໍ່ແຂງແຮງ ແລະ ຕົ້ນທຶນການບົວລະບັດເພີ່ມຂຶ້ນ.





ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;